# God’s Simple Plan of Salvation taken from I ພຣະທັມໂຢຮັນ

## Introduction

I ພຣະທັມໂຢຮັນ 5:13 ຂໍ້ຄວາມເຫລົ່ານີ້ ເຮົາຂຽນມາເຖິງເຈົ້າທັງຫລາຍທີ່ເຊື່ອໃນພຣະນາມພຣະບຸດຂອງພຣະເຈົ້າ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວ່າພວກເຈົ້າມີຊີວິດອັນຕລອດໄປເປັນນິດ

## 1. We are all sinners!

I ພຣະທັມໂຢຮັນ 1:8 ຖ້າເຮົາທັງຫລາຍເວົ້າວ່າພວກເຮົາບໍ່ມີບາບ ພວກເຮົາກໍຫລອກລວງຕົນເອງ ແລະຄວາມຈິງບໍ່ໄດ້ຢູ່ໃນພວກເຮົາ

I ພຣະທັມໂຢຮັນ 5:16-17 ຖ້າຜູ້ໃດເຫັນພີ່ນ້ອງຂອງຕົນເຮັດຜິດບາບທີ່ບໍ່ນຳໄປສູ່ຄວາມຕາຍ ຜູ້ນັ້ນຈົ່ງທູນຂໍ ແລະພຣະອົງຈະຊົງໂຜດປະທານຊີວິດແກ່ຜູ້ທີ່ໄດ້ເຮັດບາບທີ່ບໍ່ນຳໄປສູ່ຄວາມຕາຍ ຜິດບາບທີ່ນຳໄປສູ່ຄວາມຕາຍກໍມີຢູ່ ເຮົາບໍ່ໄດ້ເວົ້າວ່າໃຫ້ອ້ອນວອນໃນເຣື່ອງຜິດບາບຢ່າງນັ້ນ ການອະທັມທຸກຢ່າງກໍເປັນຜິດບາບ ແຕ່ການບາບທີ່ບໍ່ນຳໄປສູ່ຄວາມຕາຍກໍມີຢູ່

I ພຣະທັມໂຢຮັນ 3:6 ຜູ້ໃດຕັ້ງຫມັ້ນຢູ່ໃນພຣະອົງ ຜູ້ນັ້ນກໍບໍ່ເຮັດບາບຕາມເຄີຍ ຜູ້ໃດທີ່ຍັງເຮັດບາບຕາມເຄີຍ ຜູ້ນັ້ນຍັງບໍ່ເຫັນພຣະອົງ ແລະຍັງບໍ່ຮູ້ຈັກພຣະອົງ



**We are all sinners!**

## 2. There is a cost for sin!

I ພຣະທັມໂຢຮັນ 5:19 ເຮົາທັງຫລາຍຮູ້ແລ້ວວ່າພວກເຮົາເກີດຈາກພຣະເຈົ້າ ມະນຸສໂລກທັງຫມົດຈົມຢູ່ໃຕ້ອຳນາດຂອງມານຮ້າຍ

I ພຣະທັມໂຢຮັນ 5:12   ຜູ້ທີ່ມີພຣະບຸດກໍມີຊີວິດ ຜູ້ທີ່ບໍ່ມີພຣະບຸດຂອງພຣະເຈົ້າກໍບໍ່ມີຊີວິດ

I ພຣະທັມໂຢຮັນ 3:15   ຜູ້ໃດທີ່ກຽດຊັງພີ່ນ້ອງຂອງຕົນກໍເປັນຜູ້ຂ້າຄົນ ແລະເຈົ້າທັງຫລາຍຮູ້ແລ້ວວ່າ ຜູ້ຂ້າຄົນບໍ່ມີຊີວິດອັນຕລອດໄປເປັນນິດຕັ້ງຢູ່ໃນຕົນຈັກຄົນ



**There is a cost for sin!**

## 3. Jesus died and paid for our sins on the cross!

I ພຣະທັມໂຢຮັນ 4:10   ຄວາມຮັກທີ່ເຮົາກ່າວເຖິງນີ້ແຫລະ, ບໍ່ແມ່ນເຮົາທັງຫລາຍໄດ້ຮັກພຣະເຈົ້າ ແຕ່ພຣະເຈົ້າໄດ້ຊົງຮັກພວກເຮົາ ແລະຊົງໃຊ້ພຣະບຸດຂອງພຣະອົງມາເພື່ອເປັນທາງຊົງຍົກຜິດບາບຂອງພວກເຮົາ



**Christ died for sinners!**

I ພຣະທັມໂຢຮັນ 4:2-3 ດ້ວຍຂໍ້ນີ້ແຫລະ, ເຈົ້າທັງຫລາຍກໍຈະຮູ້ຈັກພຣະວິນຍານຂອງພຣະເຈົ້າ ຄື ວິນຍານທັງປວງທີ່ຍອມຮັບຮູ້ວ່າພຣະເຢຊູຄຣິດໄດ້ສະເດັດລົງມາຮັບຊາດເປັນມະນຸດ ວິນຍານນັ້ນກໍມາຈາກພຣະເຈົ້າ ແລະວິນຍານທັງປວງທີ່ບໍ່ຍອມຮັບຮູ້ພຣະເຢຊູ ວິນຍານນັ້ນກໍບໍ່ໄດ້ມາຈາກພຣະເຈົ້າ ວິນຍານນັ້ນແຫລະ, ເປັນວິນຍານຂອງຜູ້ຕໍ່ສູ້ພຣະຄຣິດ ຊຶ່ງເຈົ້າທັງຫລາຍໄດ້ຍິນວ່າຈະມາ ແລະບັດນີ້ກໍຢູ່ໃນໂລກແລ້ວ

I ພຣະທັມໂຢຮັນ 5:11 ນີ້ແຫລະ, ເປັນພຍານຫລັກຖານນັ້ນ ຄືວ່າພຣະເຈົ້າໄດ້ຊົງໂຜດປະທານຊີວິດອັນຕລອດໄປເປັນນິດໃຫ້ເຮົາທັງຫລາຍ ແລະຊີວິດນີ້ມີຢູ່ໃນພຣະບຸດຂອງພຣະອົງ

## 4. We must put our faith and trust in Christ alone!

I ພຣະທັມໂຢຮັນ 5:14-15 ນີ້ແຫລະ, ເປັນຄວາມແນ່ໃຈທີ່ເຮົາທັງຫລາຍມີຢູ່ຕໍ່ພຣະອົງ ຄືຖ້າພວກເຮົາທູນຂໍສິ່ງໃດທີ່ເປັນຕາມພຣະທັຍຂອງພຣະອົງ ພຣະອົງກໍຊົງໂຜດຟັງພວກເຮົາ ແລະຖ້າເຮົາທັງຫລາຍຮູ້ວ່າພຣະອົງຊົງໂຜດຟັງແລ້ວ ເມື່ອພວກເຮົາທູນຂໍສິ່ງໃດ ພວກເຮົາຈຶ່ງຮູ້ວ່າພວກເຮົາໄດ້ຮັບສິ່ງທີ່ພວກເຮົາຂໍຈາກພຣະອົງນັ້ນ

ພຣະທັມໂຣມ 10:9-10,13 ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ, “ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ” ແລະເຊື່ອໃນຈິດໃຈວ່າ ພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ ເຫດວ່າທີ່ມະນຸດໄດ້ເຊື່ອກໍເຊື່ອດ້ວຍໃຈຂອງຕົນ ຈຶ່ງໄດ້ຊົງຖືວ່າເປັນຄົນຊອບທັມ ແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍປາກ ຈຶ່ງຖືກຊົງໂຜດໃຫ້ພົ້ນ ເພາະວ່າ, “ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ”



*If you want to accept Jesus Christ as your Savior and receive forgiveness from God, here is prayer you can pray. Saying this prayer or any other prayer will not save you. It is only trusting in Jesus Christ that can provide forgiveness of sins. This prayer is simply a way to express to God your faith in Him and thank Him for providing for your forgiveness.*

**"Lord,**

**I know that I am a sinner. I know that I deserve the consequences of my sin which is death and hell. However, I am trusting in Jesus Christ as my Savior. I believe that His death and resurrection provided for my forgiveness. I trust in Jesus and Jesus alone as my personal Lord and Savior. Thank you Lord, for saving me and forgiving me! Amen!"**